# ສຳເລັດການຄົ້ນຄວ້າການຫັນເປັນທັນສະໄໝລະບົບຊຳລະສະສາງໃນ ສປປ ລາວ



✸ ຂ່າວ-ພາບ: ຣັດສະໝີ ດວງສັດຈະ

ທະນາຄານແຫ່ງ ສປປ ລາວ ໄດ້ສຳເລັດກອງປະຊຸມສະຫຼຸບບົດວິພາກເສດຖະກິດການຫັນເປັນທັນສະໄໝໃນລະບົບຊຳລະສະສາງໃນ ສປປ ລາວ ເຊິ່ງຈັດຂຶ້ນໃນວັນທີ 6 ທັນວາ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ສອນໄຊ ສິດພະໄຊ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ມີພາກສ່ວນທີ່ກ່ຽວຂ້ອງໃນທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມໃນຄັ້ງນີ້ແມ່ນໄດ້ສະເໜີໂດຍຫຍໍ້ບົດວິພາກເສດຖະກິດການຫັນເປັນທັນສະໄໝໃນລະບົບການຊຳລະສະສາງຂອງ ສປປ ລາວ ເຊິ່ງປະກອບມີບົດວິພາກເສດຖະກິດການຫັນເປັນທັນສະໄໝໃນລະບົບຊຳລະສະສາງຂອງທະນາຄານແຫ່ງ ສປປ ລາວ, ແຜນງານສຳລັບໄລຍະທີໜຶ່ງ, ຄາດຄະເນຄ່າໃຊ້ຈ່າຍຂອງໂຄງການ, ການວິພາກເສດຖະກິດ ແລະ ແຜນງານໃນຕໍ່ໜ້າ, ບັນຫາທີສອງແມ່ນຮູບແບບໃນລະບົບຊຳລະສະ

ສາງໃນອະນາຄົດ ແລະ ພື້ນຖານໂຄງລ່າງລະບົບຊໍາລະສະສາງ, ສິ່ງທີ່ຕ້ອງພິຈາລະນາໃນການນໍາໃຊ້ ແລະ ໂຄງສ້າງອຸປະກອນ ແລະ ເຄືອຂ່າຍເພື່ອເປັນແນວທາງໃຫ້ທະນາຄານແຫ່ງ ສປປ ລາວ ໃນການນໍາບົດວິພາກເສດຖະກິດດັ່ງກ່າວໄປຄົ້ນຄວ້າໃນການຫັນເປັນທັນສະໄໝໃນລະບົບຊໍາລະສະສາງຂອງທະນາຄານແຫ່ງ ສປປ ລາວ ໃຫ້ມີຄວາມຄົບຖ້ວນ ແລະ ສົມບູນຍິ່ງໆຂຶ້ນ.

ກອງປະຊຸມຄັ້ງນີ້ແມ່ນໄດ້ຈັດຂຶ້ນໂດຍການຮ່ວມມືຂອງທະນາຄານແຫ່ງ ສປປ ລາວ ກັບສູນສໍາລະສະສາງ KFTC ແລະ ບໍລິສັດດົງບູ CNI ແລະ ອົງການ NIPA ຂອງ ສ.ເກົາຫຼີ.